ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 156 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 08.09.2008

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງ ສະບັບເລກທີ 08/ສພຊ, ລົງວັນທີ 22 ຕຸລາ 2004.
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ປະທານຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ສະບັບເລກທີ 1289/ກທ, ລົງວັນທີ 20 ພຶດສະພາ 2008.
- ອີງຕາມ ໜັງສືສະເໜີຂອງຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 101/ທປຄ. ລົງວັນທີ 04 ກັນຍາ 2008.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດ ແລະ ແຜນການດຳເນີນງານຕ້ານການຄ້າມະນຸດໃຫ້ມີປະສິດທິຜົນ, ແນໃສ່ສະກັດກັ້ນ ແລະ ຕ້ານການຄ້າມະນຸດໃນຂອບເຂດທົ່ວປະເທດ ໂດຍມີການເຂົ້າຮ່ວມດຳເນີນການຂອງຫຼາຍພາກສ່ວນ ແລະ ຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 2. ທີ່ຕັ້ງ ແລະພາລະບົດບາດ ຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ**

ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດມີຊື່ຫຍໍ້ວ່າ: ***ຄຊຕມ*** ແມ່ນການຈັດຕັ້ງຂອງລັດທີ່ບໍ່ປະຈຳການ, ມີຫ້ອງການປະຈຳຢູ່ກະຊວງປ້ອງກັນຄວາມສະຫງົບ, ມີພາລະບົດບາດເປັນຜູ້ຊ່ວຍລັດຖະບານ ໃນການແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບັນດາກະຊວງ, ອົງການທຽບເທົ່າ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍທີ່ກ່ຽວພັນກັບການຄ້າມະນຸດ ແລະ ເຮັດໜ້າທີ່ໂຄສະນາ, ຂົນຂວາຍ, ຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການຈາກພາກສ່ວນຕ່າງໆ ທັງພາຍໃນ ແລະຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ. ເປັນໃຈກາງໃນການພົວພັນ, ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດໃນການປະຕິບັດວຽກງານຕ້ານການຄ້າມະນຸດຂອງ ສປປ ລາວ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າຮ່າງແຜນຍຸດທະສາດ ແລະ ນະໂຍບາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານການຄ້າມະນຸດເພື່ອສະເໜີລັດຖະບານພິຈາລະນາ.
2. ຄົ້ນຄ້ວາ, ຫັນເອົາແຜນຍຸດທະສາດ ແລະ ນະໂຍບາຍແຫ່ງຊາດກ່ຽວກັບການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດເພື່ອແນະນຳ ແລະ ຊຸກຍູ້ບັນດາກະຊວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
3. ສົມທົບກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອຄົ້ນຄວ້າສ້າງ ຫຼື ປັບປຸງກົດໝາຍກ່ຽວກັບການຕ້ານການຄ້າມະນຸດ ເພື່ອສະເໜີລັດຖະບານພິຈາລະນາ ແນໃສ່ຮັບປະກັນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃຫ້ມີປະສິດທິຜົນ;
4. ສະຫຼຸບສັງລວມ ແລະ ລາຍງານໃຫ້ລັດຖະບານກ່ຽວກັບຜົນ ຂອງການຈັດຕັ້ງປະຕິບັດແຜນການ, ແຜນງານ ແລະ ໂຄງການ ໃນແຕ່ລະໄລຍະ; ສຶກສາ, ຄົ້ນຄວ້າຄືນແຜນຍຸດທະສາດ, ນະໂຍບາຍແຫ່ງຊາດຕ້ານການຄ້າມະນຸດ ໃຫ້ສອດຄ່ອງກັບສະພາບຕົວຈິງ ໃນແຕ່ລະໄລຍະແລ້ວນຳສະເໜີຂໍອະນຸມັດຈາກລັດຖະບານ;
5. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດໃຫ້ແກ່ປະຊາຊົນ ແລະ ພາກສ່ວນຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບຊາບຢ່າງກວ້າງຂວາງ;
6. ພົວພັນຮ່ວມມື ແລະຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
7. ຄົ້ນຄວ້າຮ່າງບົດລາຍງານປະຈຳປີ ຂອງລັດຖະບານກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ;

8. ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍ ແລະ ນຳສົ່ງເຂົາເຈົ້າກັບຄືນທ້ອງຖິ່ນຢ່າງມີຄວາມປອດໄພ. ສ້າງທຸກເງື່ອນໄຂບໍ່ໃຫ້ຜູ້ຖືກເຄາະຮ້າຍກາຍເປັນຜູ້ຖືກເຄາະຮ້າຍຊ້ຳຕື່ມອີກ;
9. ປະກອບສຳນວນເອກະສານແລ້ວຍື່ນສະເໜີຕໍ່ອົງການປົກປ້ອງກົດໝາຍ ເພື່ອສືບສວນ-ສອບສວນດຳເນີນຄະດີຕໍ່ຜູ້ລະເມີດກົດໝາຍທີ່ພົວພັນເຖິງການສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
10. ປະຕິບັດໜ້າທີ່ອື່ນໆທີ່ລັດຖະບານ ແລະ ນາຍົກລັດຖະມົນຕີມອບໝາຍໃຫ້ສະເພາະ.

ມາດຕາ 4. **ຂອບເຂດສິດ**

ຄະນະຊີ້ນຳລະດັບຊາດ ຕ້ານການຄ້າມະນຸດມີສິດດັ່ງນີ້ :

1. ຄົ້ນຄວ້າ ແລະ ນຳສະເໜີນາຍົກລັດຖະມົນຕີພິຈາລະນາແຕ່ງຕັ້ງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ;
2. ພິຈາລະນາຮັບຮອງເອົາພາລະບົດບາດ ແລະ ແຜນການດຳເນີນງານຂອງຄະນະຊີ້ນຳຕ້ານການຄ້າມະນຸດແຕ່ລະຂັ້ນ;
3. ປຸກລະດົມ, ຂົນຂວາຍປະຊາຊົນ, ບັນດາອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນໃຫ້ມີສ່ວນຮ່ວມເຂົ້າໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດ;
4. ພົວພັນ, ປະສານງານ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດຕາມແນວທາງນະໂຍບາຍ ແລະ ລະບຽບກົດໝາຍວາງອອກ;
5. ສະເໜີປັບປຸງກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ທີ່ພົວພັນເຖິງວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ທີ່ເຫັນວ່າບໍ່ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງພາຍໃນປະເທດ ແລະ ສາກົນ;
6. ຮຽກເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາ ຕ່າງໆ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ;
7. ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ຫຼື ຄຳແນະນຳ ເພື່ອຈັດຕັ້ງປະຕິບັດກົດໝາຍ, ມະຕິ ຄຳສັ່ງຂອງລັດຖະບານ ກ່ຽວກັບວຽກງານສະກັດກັ້ນ ແລະຕ້ານການຄ້າມະນຸດ;
8. ຄຸ້ມຄອງ ແລະ ນຳໃຊ້ງົບປະມານປະຈຳປີ, ທຶນຮອນທີ່ໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດຢ່າງມີປະສິດທິຜົນ.
9. ປະຕິບັດສິດອື່ນໆ ຕາມລະບຽບກົດໝາຍກຳນົດ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ

ມາດຕາ 5. **ໂຄງປະກອບກົງຈັກ ແລະ ສາຍໃຍການຈັດຕັ້ງ**

5.1 **ໂຄງປະກອບກົງຈັກ**

ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ເປັນການຈັດຕັ້ງທີ່ບໍ່ປະຈຳການ ແຕ່ມີຫ້ອງການ ຫຼື ກອງເລຂາຊ່ວຍວຽກ ໂດຍຖືເອົາກົມຕຳຫຼວດສືບສວນ-ສອບສວນ ທີ່ຂຶ້ນກັບກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຫ້ອງການກອງເລຂາດັ່ງກ່າວ ໂດຍແມ່ນຮອງຫົວໜ້າກົມໃຫຍ່

ຕຳຫຼວດ ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນຫົວໜ້າ. ທ່ານຫົວໜ້າກົມທີ່ກ່ຽວຂ້ອງ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ທ່ານຫົວໜ້າກົມທີ່ກ່ຽວຂ້ອງ ຂອງສູນກາງສະຫະພັນແມ່ຍິງລາວ ປະກອບເປັນຮອງຫົວໜ້າກອງເລຂາ, ສຳລັບກົມກອງອື່ນແມ່ນປະກອບເຂົ້າເປັນຄະນະກອງເລຂາ. ພະນັກງານປະຈຳການ ຂອງກອງເລຂາແມ່ນພະແນກຕ້ານການຄ້າມະນຸດຂອງກົມຕຳຫຼວດສືບສວນ-ສອບສວນ.

**5.2 ສາຍໃຍການຈັດຕັ້ງຢູ່ຂັ້ນແຂວງ**

ຢູ່ຂັ້ນແຂວງມີຄະນະຊີ້ນຳຕ້ານການຄ້າມະນຸດແຂວງ ແລະ ນະຄອນຫຼວງ

ມອບໃຫ້ປະທານຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ອອກຂໍ້ຕົກລົງກຳນົດລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່ ແລະ ໂຄງປະກອບການຈັດຕັ້ງຂອງກອງເລຂາຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ແລະ ຂອງຄະນະຊີ້ນຳຕ້ານການຄ້າມະນຸດແຂວງ ແລະ ນະຄອນຫຼວງພ້ອມທັງແຕ່ງຕັ້ງບຸກຄະລາກອນເຂົ້າໃນກອງເລຂາ ແລະ ຄະນະດັ່ງກ່າວ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

**ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ຊຶ່ງປະກອບດ້ວຍ:**

1. ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນປະທານ
2. ທ່ານ ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ ແລະ ທັງເປັນຜູ້ປະຈຳການ
3. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ 01 ທ່ານ ເປັນຮອງປະທານ
4. ທ່ານ ຮອງປະທານສູນກາງສະຫະພັນແມ່ຍິງລາວ 01 ທ່ານ ເປັນຮອງປະທານ
5. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ 01 ທ່ານ ເປັນຄະນະ
6. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງຍຸຕິທຳ 01 ທ່ານ ເປັນຄະນະ
7. ທ່ານ ຮອງປະທານສານປະຊາຊົນສູງສຸດ 01 ທ່ານ ເປັນຄະນະ
8. ທ່ານ ຮອງໄອຍະການປະຊາຊົນສູງສຸດ 01 ທ່ານ ເປັນຄະນະ
9. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກ 01 ທ່ານ ເປັນຄະນະ
10. ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ 01 ທ່ານ ເປັນຄະນະ
11. ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ 01 ທ່ານ ເປັນຄະນະ
12. ທ່ານ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ 01 ທ່ານ ເປັນຄະນະ
13. ທ່ານ ຮອງປະທານສູນກາງສະຫະພັນກຳມະບານລາວ 01 ທ່ານ ເປັນຄະນະ
14. ທ່ານ ຮອງຫົວໜ້າອົງການທ່ອງທ່ຽວແຫ່ງຊາດ 01 ທ່ານ ເປັນຄະນະ
15. ທ່ານ ກຳມະການຄະນະເລຂາທິການລັດຖະບານ 01 ທ່ານ ເປັນຄະນະ
16. ທ່ານ ຮອງຫົວໜ້າກົມໃຫຍ່ຕຳຫຼວດ, ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນຫົວໜ້າກອງເລຂາ

17. ທ່ານ ຫົວໜ້າກົມສັງຄົມສົງເຄາະກະຊວງແຮງງານ ແລະ ສະຫວັດດີການ ສັງຄົມ ເປັນຮອງຫົວໜ້າກອງເລຂາ

18. ທ່ານ ຫົວໜ້າສູນໃຫ້ຄຳປຶກສາແມ່ຍິງ ແລະ ເດັກນ້ອຍ, ສູນກາງສະຫະພັນແມ່ຍິງລາວ ເປັນຮອງຫົວໜ້າກອງເລຂາ

## ໝວດທີ IV
## ໜ້າທີ່ ແລະ ຂອບເຂດສິດ
## ຂອງປະທານ, ຮອງປະທານ ແລະ ແບບແຜນວິທີເຮັດວຽກຂອງຄະນະ

**ມາດຕາ 7. ໜ້າທີ່ ແລະ ຂອບເຂດສິດຂອງປະທານ**

ປະທານຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດມີ ໜ້າທີ່ ແລະຂອບເຂດສິດ ດັ່ງນີ້:

1. ຮັບຜິດຊອບທຸກໆການເຄື່ອນໄຫວ ຂອງຄະນະກຳມະການຊີ້ນຳລະດັບຊາດຕ້ານການຄ້າມະນຸດໂດຍວາງທິດທາງ, ສ້າງແຜນການ, ປະສານງານກັບພາກສ່ວນຕ່າງໆຢູ່ພາຍໃນປະເທດ, ພົວພັນຮ່ວມມືກັບຕ່າງປະເທດ ແລະ ສາກົນ;
2. ເປັນປະທານກອງປະຊຸມສາມັນ ແລະ ວິສາມັນຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ
3. ເປັນຜູ້ລົງລາຍເຊັນກ່ຽວກັບເອກະສານສຳຄັນ ຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ;
4. ລາຍງານຜົນຂອງການດຳເນີນງານໃນແຕ່ລະໄລຍະຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດຕໍ່ລັດຖະບານ;
5. ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະທ່ານໃນຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ.

**ມາດຕາ 8. ໜ້າທີ່ ແລະ ຂອບເຂດສິດຂອງຮອງປະທານ**

ຮອງປະທານ ແລະ ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ມີໜ້າທີ່ ແລະ ຂອບເຂດສິດດັ່ງນີ້:

1. ຮອງປະທານເປັນຜູ້ຊ່ວຍປະທານ, ພ້ອມທັງເປັນຜູ້ປະຈຳການ ຮັບຜິດຊອບລົງເລິກວຽກງານໃດໜຶ່ງທີ່ປະທານມອບໝາຍໃຫ້. ໃນກໍລະນີທີ່ປະທານຫາກບໍ່ຢູ່ ຮອງປະທານຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ຮັບຜິດຊອບແທນໃນການລົງລາຍເຊັນ, ເປັນປະທານກອງປະຊຸມ, ຊີ້ນຳການເຄື່ອນໄຫວວຽກງານຕ່າງໆ ເຊັນເອກະສານທົ່ວໄປ ຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ;
2. ຮອງປະທານມີສິດປະກອບຄຳຄິດຄຳເຫັນຕໍ່ບັນຫາຕ່າງໆ ລວມທັງແຜນດຳເນີນງານ, ແຜນງົບປະມານ ແລະ ການສັງເກດຕີລາຄາ, ສະຫຼຸບຖອດຖອນບົດຮຽນໃນການປະຕິບັດວຽກງານ ໃນແຕ່ລະໄລຍະ;
3. ລາຍງານສະພາບການຈັດຕັ້ງປະຕິບັດແຜນປະຕິບັດງານການປ້ອງກັນ, ສະກັດກັ້ນ ແລະ ຕ້ານການຄ້າມະນຸດຕໍ່ກອງປະຊຸມ ແລະ ນຳເອົາມະຕິຕົກລົງຂອງກອງປະຊຸມໄປລາຍງານໃຫ້ຂັ້ນນຳຂອງຕົນຊາບ, ພ້ອມທັງຜັນຂະຫຍາຍໃຫ້ເປັນອັນລະອຽດ ແລະ ຮັບຜິດຊອບຈັດຕັ້ງປະຕິບັດມະຕິຕົກລົງດັ່ງກ່າວໃນຂະແໜງການຂອງຕົນ;
4. ສະເໜີປະທານເພື່ອອະນຸມັດຮຽກປະຊຸມວິສາມັນ ໃນກໍລະນີຮີບດ່ວນ.

**ມາດຕາ 9. ແບບແຜນວິທີເຮັດວຽກ**

ຄະນະຊີ້ນຳຕ້ານການຄ້າມະນຸດທຸກຂັ້ນເຄື່ອນໄຫວວຽກງານຕາມຫຼັກການຕໍ່ໄປນີ້:

1. ທຸກການເຄື່ອນໄຫວຕ້ອງປະຕິບັດໃຫ້ສອດຄ່ອງ, ຖືກຕ້ອງກັບແນວທາງນະໂຍບາຍຂອງພັກ ແລະ ແຜນຍຸດທະສາດຂອງລັດຖະບານ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ;
2. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ບົນພື້ນຖານຄວາມເປັນເອກະພາບຂອງໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ເຮັດວຽກຢ່າງມີແຜນການ, ມີການສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະປະຕິບັດລະບອບສອງແສງລາຍງານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນ ແລະ ຕ່າງປະເທດເປັນປົກກະຕິ, ພ້ອມທັງຕີລາຄາຜົນສຳເລັດໃນການ ຊີ້ນຳ-ນຳພາການຈັດຕັ້ງປະຕິບັດວຽກງານ ໃນແຕ່ລະໄລຍະລາຍງານໃຫ້ລັດຖະບານຊາບ;
3. ຈັດກອງປະຊຸມຄົ້ນຄວ້າ, ສະຫຼຸບຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດຢ່າງເປັນປົກກະຕິ;
4. ປະສານງານ ແລະ ຮ່ວມມືກັບບັນດາອົງການຈັດຕັ້ງສາກົນທີ່ເຮັດວຽກງານຕ້ານການຄ້າມະນຸດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ V
## ແຫຼ່ງລາຍຮັບ ແລະ ເປົ້າໝາຍການນຳໃຊ້

**ມາດຕາ 10. ແຫຼ່ງລາຍຮັບ ແລະເປົ້າໝາຍນຳໃຊ້ແຫຼ່ງລາຍຮັບ**

- ແຫຼ່ງລາຍຮັບ: ແມ່ນໄດ້ມາຈາກງົບປະມານປະຈຳປີຂອງລັດຖະບານ, ການປະກອບສ່ວນຂອງພາກລັດ, ເອກະຊົນ ແລະ ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ.
- ເປົ້າໝາຍນຳໃຊ້: ວຽກງານບໍລິຫານ, ອຸປະກອນພາຫະນະຮັບໃຊ້ອັນຈຳເປັນ, ວຽກງານໂຄສະນາສຶກສາອົບຮົມ, ຍົກລະດັບຄວາມສາມາດຂອງບຸກຄະລາກອນທີ່ເຮັດວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ຊ່ວຍເຫຼືອຂັ້ນຕົ້ນໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ວຽກງານອື່ນໆ ທີ່ພົວພັນເຖິງວຽກງານຕ້ານການຄ້າມະນຸດ.

ມອບໃຫ້ປະທານຄະນະຊີ້ນຳລະດັບຊາດ ຕ້ານການຄ້າມະນຸດເປັນຜູ້ກຳນົດ ລະບຽບການລະອຽດໃນການຄຸ້ມຄອງ, ການນຳໃຊ້ງົບປະມານ ແລະ ລາຍຮັບອື່ນໆທີ່ໄດ້ກຳນົດໄວ້ຕາມດຳລັດສະບັບນີ້.

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 11. ຕາປະທັບ**

ຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ແລະ ກອງເລຂາ ຂອງຄະນະ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 12. ການຈັດຕັ້ງປະຕິບັດ**

ມອບໃຫ້ປະທານຄະນະຊີ້ນຳລະດັບຊາດ ດ້ານການຄ້າມະນຸດຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຕາມພາລະບົດບາດ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 13. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ທຸກໆຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

**ບົວສອນ ບຸບຜາວັນ**